Seattle
Office of Sustainability
& Environment

**ສະໝັກຂໍຮັບເງິນທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມຂອງເມືອງຊີແອດເທິລ**

ຫ້ອງການຄວາມຍືນຍົງ ແລະ ສິ່ງແວດລ້ອມຂອງເມືອງຊີແອດເທິລ (OSE) ມີຄວາມຕື່ນເຕັ້ນທີ່ຈະປະກາດວ່າກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມ **ກຳລັງ** **ເປີດຮັບໃບສະໝັກ** **ໄປຈົນເຖິງວັນທີ 3 ມິຖຸນາ!**

ກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມ (EJ) ສ້າງຕັ້ງຂຶ້ນໃນປີ 2018 ເຊິ່ງເປັນສ່ວນໜຶ່ງຂອງ ວາລະດ້ານຄວາມສະເໝີພາບແລະສິ່ງແວດລ້ອມຂອງເມືອງຊີແອດເທິລ ເພື່ອລົງທຶນໃນໂຄງການທີ່ນຳພາໂດຍຊຸມຊົນເພື່ອເຮັດໃຫ້ເກີດຄວາມກ້າວໜ້າດ້ານຄວາມຄວາມຍຸຕິທຳດ້ານສະພາບພູມີອາກາດ. ກອງທຶນ EJ ອອກແບບມາເພື່ອປົກປ້ອງ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນເມືອງຊີແອດເທິລທີ່ໄດ້ຮັບຜົນກະທົບເປັນກຸ່ມທຳອິດ ແລະເປັນກຸ່ມທີ່ໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດຈາກການປ່ຽນແປງສະພາບພູມີອາກາດ, ສະພາບອາກາດທີ່ຮ້າຍແຮງ ແລະ ຄວາມບໍ່ສະເໝີພາບດ້ານສິ່ງແວດລ້ອມ ລວມທັງກຸ່ມຄົນຜິວດຳ, ຄົນພື້ນເມືອງ, ຄົນຜິວສີ (BIPOC), ຄົນເຂົ້າເມືອງ, ຜູ້ລີ້ໄພ, ຊາວໜຸ່ມ, ຜູ້ສູງອາຍຸ ແລະຜູ້ຢູ່ອາໄສທີ່ມີລາຍໄດ້ຕໍ່າ.

ໃນປີນີ້ **ມີການສະໜອງເງິນທຶນໃຫ້** ສາມທາງເລືອກ:

- ທາງເລືອກທີ່ 1: ສະເໜີໃຫ້ຄວາມຊ່ວຍເຫຼືອລ້າຕັ້ງແຕ່ 10,000 ໂດລາ ຫາ 40,000 ໂດລາ
- ທາງເລືອກທີ່ 2: ສະເໜີໃຫ້ຄວາມຊ່ວຍເຫຼືອລ້າຕັ້ງແຕ່ 40,001 ໂດລາ ຫາ 90,000 ໂດລາ
- ທາງເລືອກທີ່ 3: ສະເໜີໃຫ້ຄວາມຊ່ວຍເຫຼືອລ້າຕັ້ງແຕ່ 10,000 ໂດລາ ຫາ 90,000 ໂດລາ ໃຫ້ແກ່ໂຄງການທີ່ນຳພາໂດຍ ແລະ ຮັບໃຊ້ຊຸມຊົນໃນພື້ນທີ່**Duwamish Valley**

ຊົນເຜົ່າ ແລະ ອົງກອນຂອງຊົນເຜົ່າ, ອົງກອນທີ່ບໍ່ຫວັງຜົນກຳໄລ, ແລະກຸ່ມຊຸມຊົນ ແລະລະແວກໃກ້ຄຽງແມ່ນມີສິດທີ່ຈະໄດ້ຮັບເງິນທຶນ. ໂຄງການຈະຕ້ອງໄດ້ຮັບການນຳພາໂດຍ ແລະໃຫ້ປະໂຫຍດໂດຍກົງຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບຢ່າງບໍ່ສົມດຸນຈາກບັນຫາສິ່ງແວດລ້ອມ. ໂຄງການທີ່ມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອໄດ້ແກ່:

- ໂຄງການດ້ານສິນລະປະ ແລະ ການເລົ່າເລື່ອງ
- ການໃຫ້ຄວາມຮູ້ແກ່ຊຸມຊົນ
- ການສ້າງຂີດຄວາມສາມາດຂອງອົງກອນແລະຊຸມຊົນ
- ການປັບຕົວ ແລະຄວາມຍືດຢຸ່ນຕໍ່ການປ່ຽນແປງສະພາບພູມີອາກາດ
- ການວາງແຜນ ແລະ ການກຳນົດວິໄສທັດຂອງຊຸມຊົນ,
- ການເສີມສ້າງທັກສະ ແລະ ການຝຶກອົບຮົມທີ່ກ່ຽວຂ້ອງກັບອາຊີບ

*ຖ້າທ່ານສົນໃຈທີ່ຈະຮຽນຮູ້ເພີ່ມເຕີມກ່ຽວກັບກອງທຶນນີ້, ປຶກສາຫາລືກ່ຽວກັບແນວຄວາມຄິດຂອງໂຄງການ ຫຼື ນຳສົ່ງຂໍ້ສະເໜີ ພວກເຮົາຂໍແນະນຳໃຫ້ດຳເນີນການຕາມຂັ້ນຕອນດັ່ງຕໍ່ໄປນີ້:*

- ພົບກັບທີ່ປຶກສາຜູ້ຊ່ວຍດ້ານເຕັກນິກ **ກ່ອນທີ່ຈະ**ຍື່ນໃບສະໝັກ. ບໍລິການນີ້ແມ່ນບໍ່ເສຍຄ່າ ແລະ ສາມາດຮ້ອງຂໍໄດ້ໂດຍ ກອກແບບຟອມນີ້ ພາຍໃນວັນທີ 15 ພຶດສະພາ.
- ເຂົ້າຮ່ວມການປະຊຸມໃຫ້ຂໍ້ມູນຂ່າວສານທາງອອນລາຍ:
  - ວັນສຸກ, ວັນທີ 11 ເມສາ, ເວລາ 12 - 1:15 ໂມງບ່າຍ
    - ລິງທະບຽນເພື່ອເຂົ້າຮ່ວມການປະຊຸມຄັ້ງທຳອິດຜ່ານ Zoom
  - ວັນຈັນ, ວັນທີ 28 ເມສາ, ເວລາ 6 - 7:15 ໂມງແລງ
    - ລິງທະບຽນເພື່ອເຂົ້າຮ່ວມການປະຊຸມຄັ້ງທີສອງຜ່ານ Zoom

ຖ້າຕ້ອງການຮ້ອງຂໍບໍລິການແປພາສາ ຫຼື ການອຳນວຍຄວາມສະດວກອື່ນໆສຳລັບການປະຊຸມໃຫ້ຂໍ້ມູນຂ່າວສານ ກະລຸນາສົ່ງອີເມວໄປທີ່ equityenviro@seattle.gov
ຢ່າງໜ້ອຍໜຶ່ງອາທິດກ່ອນການປະຊຸມທີ່ທ່ານວາງແຜນຈະເຂົ້າຮ່ວມ.
ພວກເຮົາພ້ອມທີ່ຈະຕອບຄຳຖາມຜ່ານທາງອີເມວເຊັ່ນກັນ.